Savan PAD ຈົດໝາຍແຈ້ງຂ່າວ

15 ພະຈິກ, 2021

23

# ຫ້ອງການກະສິກຳ ແລະ ປ່າໄມ້ (5)

ພວກເຮົາໄດ້ສຸມໃສ່ຫ້ອງການກະສິກຳ ແລະ ປ່າໄມ້ (ກປມ) ນັບຈາກສະບັບທີ 19 ເປັນຕົ້ນມາ ແລະ ກໍ່ຈະຊິ້ນສຸດດ້ວຍສະບັບນີ້. ປະຈຸບັນ, ໂຄງການຂອງພວກເຮົາດຳເນີນກິດຈະກຳຕ່າງໆຢູ່ 12 ບ້ານເປົ້າໝາຍ ພາຍໃນ 9 ເມືອງຂອງແຂວງສະຫວັນນະເຂດ. ເມືອງສອງຄອນ ແລະ ເມືອງພີນເປັນເມືອງທີ່ຖືກຄັດເລືອກໃຫມ່ລ່າສຸດໃນການເຂົ້າຮ່ວມເຄື່ອນໄຫວຈັດຕັ້ງປະຕິບັດກິດຈະກຳຮ່ວມກັບໂຄງການສະຫວັນພັດເລີ່ມແຕ່ເດືອນທັນວາ ປີ 2019 ເປັນຕົ້ນມາ.

## ກປມ ເມືອງສອງຄອນ

ໂຄງການເປົ້າໝາຍ : ສອງຄອນ, ໜອງເດີ່ນ




ໃນຈຳນວນປະຊາກອນ 100,000 ຄົນຂອງເມືອງສອງຄອນ, ຫຼາຍກ່ວາ 70% ແມ່ນເຮັດນາເປັນຫຼັກ, ຮອງລົງມາແມ່ນລ້ຽງສັດ ແລະປູກພືດສຳຮອງ. ພື້ນທີ່ດິນກະສິກຳຂອງເມືອງສອງຄອນສ່ວນຫຼາຍແມ່ນທົ່ງພຽງຢູ່ເລາະລຽບຕາມແມ່ນ້ຳຂອງ ແລະ ນ້ຳເຊບັ້ງຫຽງ.ການຜະລິດເຂົ້າຂອງສອງບ້ານເປົ້າໝາຍຂອງໂຄງການ ສະຫວັນພັດໄດ້ແກ່ບ້ານ ສອງຄອນ ແລະ ໜອງເດີ່ນແມ່ນສາມາດຜະລິດໄດ້ລະດູດຽວຄືນາແຊງ (ເພາະນາປີສ່ຽງຕໍ່ໄພນ້ຳຖ້ວມ) ໂດຍມີເນື້ອທີ່ 500 ເຮັກຕາ. ທັງສອງບ້ານແມ່ນສາມາດບັນລຸສະມັດຕະພາບໄດ້ 4.5-5 ໂຕນ/ເຮັກຕາ, ເຊິ່ງເປັນລະດັບທີ່ເພິ່ງພໍໃຈ. ນອກຈາກນັ້ນ, ພວກເຮົາຂໍສະແດງຄວາມຂອບໃຈມາຍັງໂຄງການສະຫວັນພັດໂດຍສະເພາະໃຫ້ການສະໜັບສະໜູນທາງດ້ານວັດຖຸ ແລະ ຜ້າຢາງມຸງເຮືອນຮົ່ມ ເພາະພວກເຮົາເຊື່ອວ່າການເຮັດແນວນີ້ຈະມີທ່າແຮງທີ່ດີໃນການປູກ ແລະ ຂາຍຜັກໃນຕໍ່ໄປ.



ທ່ານ. ທະວີສຸກ
ຫົວໜ້າ ກປມ ເມືອງສອງຄອນ

### ດ້ານເຕັກນິກກະສິກຳ (ການປູກເຂົ້າ)

- ໄດ້ຈັດນະໂຍບາຍກູ້ຢືມເມັດພັນເຂົ້າ ແລະ ປຸ໋ຍໃນລະດູແລ້ງ 1 ຄັ້ງມີ 90 ຄຄ ເຂົ້າຮ່ວມໂຄງການ (27% ຂອງຊາວນາທັງໝົດໃນບ້ານເປົ້າໝາຍ). ສຳລັບນາປີ, ມີພຽງແຕ່ການຈັດຝຶກອົບຮົມເທົ່ານັ້ນເພາະວ່າສ່ຽງຕໍ່ນ້ຳຖ້ວມ.
- ສຳລັບລະດູແລ້ງປີ 2020-21, ໄດ້ຈັດຝຶກອົບຮົມພາກສະໜາມໃຫ້ແກ່ພ/ງ ກປມ ແລະ ຊາວນາຢູ່ທົ່ງນາທົດລອງ.
- ຊາວນາມີການຈັດຕັ້ງທີ່ດີ ແລະ ການເກັບກຳເງິນກູ້ຢືມໄດ້ຢ່າງສະດວກດີ.

### ພາບລວມ

ນ້ຳເຊທີ່ໄຫລຜ່ານເຂດນີ້ເກືອບຖ້ວມທຸກປີໂດຍສະເພາະໃນປີ 2019 ແລະ 2020 ສະພາບເສັ້ນທາງໃນສອງບ້ານເປົ້າໝາຍນີ້ລະດູຝົນແມ່ນເຊື່ອມໂຊມຫຼາຍ ແລະ ສາມາດເຂົ້າໄດ້ໂດຍເຮືອຂ້າມຟາກເທົ່ານັ້ນ. ຄຽງຄູ່ກັນນັ້ນ, ຊາວນາໃນບ້ານເປົ້າໝາຍແມ່ນມີຄວາມສາມັກຄີກັນດີ ແລະ ມີສ່ວນຮ່ວມຢ່າງຈິງຈັງໃນກິດຈະກຳຂອງໂຄງການ.



### ດ້ານການຕະຫຼາດ / ການປູກພືດສວນ

- ໄດ້ທົດລອງການປູກມັນຫວານຕັ້ງແຕ່ລະດູຝົນປີ 2020. ຜົນຜະລິດບໍ່ເພີ່ມເນື່ອງຈາກການຂາດແຄນນ້ຳ ແລະ ການລະບາດຂອງສັດຕູພືດ, ແຕ່ຊາວນາກຳລັງກະກຽມປູກໃໝ່ສຳລັບລະດູການຕໍ່ໄປ.
- ປະຈຸບັນ, ການໃຫ້ຄຳແນະນຳກ່ຽວກັບການເຮັດຝຸ່ນໂບຊິ, ການຄວບຄຸມສັດຕູພືດ ແລະ ການພົບປະຂອງພາກສ່ວນທີ່ກ່ຽວຂ້ອງທາງການຕະຫຼາດແມ່ນຈະໄດ້ຮັບການດຳເນີນການໃນໄວໆນີ້.

### ດ້ານຊົນລະປະທານ / ສ້າງຄວາມເຂັ້ມແຂງໃຫ້ກຸ່ມນຳໃຊ້ນ້ຳ

- ພະນັກງານ ກປມ ກໍ່ມີແຮງຈູງໃຈສູງທີ່ຈະຮຽນຮູ້ ແລະ ມີຄວາມກະຕືລືລົ້ນ.
- ການຜັນປ່ຽນເຂດຊົນລະປະທານລະດູແລ້ງ*

  ໂຄງການສອງຄອນ 47ຮ → 94ຮ (2.0 ເທົ່າ)

  ໂຄງການໜອງເດີ່ນ 94ຮ →129ຮ (1.4 ເທົ່າ)

  *ການສົມທຽບລະຫວ່າງນາແຊງປີ 2018-19 & 2020-21
- ໃນສອງບ້ານເປົ້າໝາຍ, ກຸ່ມຜູ້ນຳໃຊ້ນ້ຳປະຊຸມປະມານເດືອນລະ 3 ຄັ້ງ ເພື່ອແກ້ໄຂບັນຫາ ແລະ ປັບປຸງການແຈກຢາຍນ້ຳ.

# ກປມ ເມືອງພິນ

ໂຄງການເປົ້າໝາຍ : ຫ້ວຍສະຄວງ



ທ່ານ. ຄູນທອງ
ຫົວໜ້າຫ້ອງການ ກປມ ເມືອງພິນ




ເມືອງພິນເປັນເມືອງທີ່ມີເນື້ອທີ່ເຄິ່ງທົ່ງພຽງເຄິ່ງພູດອຍ. ປະຊາຊົນຍຶດຖືການຜະລິດເຂົ້າເປັນຕົ້ນຕໍ, ແລະ ການປູກໄມ້ອຸດສາຫະກໍາ ໂດຍມີເນື້ອທີ່ການຜະລິດເຂົ້ານາປີທັງໝົດ 9,400 ເຮັກຕາ. ສະເພາະເຂດໂຄງການຊົນລະປະທານຫ້ວຍສະຄວງທີ່ເປັນເຂດເປົ້າໝາຍຂອງໂຄງການສະຫວັນເພດມີເນື້ອທີ່ 700 ເຮັດຕາ. ປະຈຸບັນນີ້ ມີ 7 ຄອບຄົວ ນອກຈາກຈະປູກເຂົ້າແລ້ວຍັງໄດ້ຮັບການສະໜັບສະໜຸນຈາກໂຄງການໃນການຜະລິດເມັດພັນເຂົ້າເພື່ອຂາຍ. ເຖິງວ່າໂຄງການຈະປິດໃນມໍ່ໆນີ້ກໍ່ຕາມ, ແຕ່ພວກເຮົາກໍ່ມີແຜນຈະຂະຫຍາຍຕໍ່ໄປອີກ. ໃນປະຈຸບັນ, ລະບົບຊົນລະປະທານແມ່ນກໍາລັງຟື້ນຟູໂດຍການຊ່ວຍເຫຼືອຂອງ ADB, ແລະ ບໍ່ສາມາດສົ່ງນໍ້າໄດ້ໃນຊ່ວງລະດູແລ້ງນີ້. ເນວໃດກໍ່ຕາມ, ພາຍຫຼັງສ້ອມແປງ ແລະ ສາມາດສົ່ງນໍ້າໄດ້ປົກກະຕິແລ້ວ, ພວກເຮົາຈະສືບຕໍ່ນໍາໃຊ້ເຕັກນິກທີ່ຮຽນຮູ້ຈາກໂຄງການເພື່ອນໍາພາຊາວນາຈັດຕັ້ງປະຕິບັດ.

## ດ້ານເຕັກນິກກະສິກໍາ (ການປູກເຂົ້າ)

- ນາປີປີກາຍນີ້, ມີຊາວນາເຂົ້າຮ່ວມນະໂຍບາຍກູ້ຢືມເມັດພັນເຂົ້າ ແລະ ປຸ໋ຍ 37 ຄອບຄົວ. ນັ້ບແຕ່ນັ້ນມາ, ການປູກຝັງກໍ່ໄດ້ລະງັບເນື່ອງຈາກການສ້ອມແປງຄອງເໝືອງ.
- ນາປີຂອງປີ 2021, ຊາວນາ 7 ຄຄ ກໍາລັງທົດລອງການຜະລິດເມັດພັນເຂົ້າ. ສະພາບດິນແມ່ນດີກ່ວາພື້ນທີ່ອື່ນໆ.

## ພາບລວມ

ເຖິງວ່າເມືອງພິນຈະຢູ່ຫ່າງໆຈາກເທດສະບານຂອງແຂວງ, ຢູ່ຕາມເສັ້ນທາງເລກທີ 9 ອອກສູ່ຫວຽດນາມດັ່ງນັ້ນການເຂົ້າເຖິງຂອງຜູ້ຄົນ ແລະ ການເຄື່ອນຍ້າຍສິນຄ້າຜ່ານເມືອງນີ້ຈຶ່ງງ່າຍດາຍ. ບ້ານເປົ້າໝາຍຂອງໂຄງການ, ຫ້ວຍສະຄວງຫ່າງໆຈາກຕົວເມືອງປະມານ 10 ຫຼັກຕາມເສັ້ນທາງເຫ່ງຊາດ, ລະດັບຄວາມສູງ 185 ແມັດທຽບກັບລະດັບນໍ້າທະເລ. ເປັນເວລານ້ອຍກ່ວາ 2 ປີທີ່ໂຄງການໄດ້ເລີ່ມຈັດຕັ້ງປະຕິບັດກິດຈະກໍາ, ແຕ່ວ່າໂດຍລວມແລ້ວຊາວນາເຂດນີ້ມີຄວາມຕັ້ງໃຈສູງ.

## ດ້ານການຕະຫຼາດ / ການປູກພືດສວນ



- ກຸ່ມຊາວນາໃນບ້ານເປົ້າໝາຍໄດ້ເປີດຮ້ານຂາຍຜັກໂດຍກົງຢູ່ໃຈກາງເມືອງ. ຍອດຂາຍເພີ່ມຂຶ້ນ 76%*

*ການສົມທຽບສະເລ່ຍຕໍ່ຄົວເຮືອນ: 2018-19 & 2020-21

- ມາຮອດປະຈຸບັນນີ້, ຄູ່ມືແນະນໍາກ່ຽວກັບການໃຊ້ແຍ່ງເຂົ້າໃນການປູກເພື່ອປ້ອງກັນແມງເຕົ່າທອງ, ການເຮັດຝຸ່ນໝັກ ແລະ ຝຸ່ນໂບກາຊິແມ່ນໄດ້ຈັດຕັ້ງປະຕິບັດຢູ່ໃນບ້ານເປົ້າໝາຍດ້ວຍການຕອບສະໜອງທີ່ດີຈາກຊາວນາ.

## ດ້ານຊົນລະປະທານ / ສ້າງຄວາມເຂັ້ມແຂງໃຫ້ກຸ່ມນໍາໃຊ້ນໍ້າ

- ເນື່ອງຈາກວ່າການຟື້ນຟູລະບົບຄອງເໝືອງໂດຍທຶນຂອງ ADB, ບໍ່ມີການແຈກຢາຍນໍ້ານາແຊງສູ່ສະຖານທີ່ບ້ານເປົ້າໝາຍໃນປີ 2020-21.
- ພະນັກງານ ກປມ ມີແຮງຈູງໃຈສູງທີ່ຈະຮຽນຮູ້ທັກສະຕ່າງໆ ເຊັ່ນວ່າການສໍາຫຼວດທີ່ດິນ ແລະ ມີສ່ວນຮ່ວມຢ່າງຫ້າວຫັ້ນໃນການຮ່ວມຝຶກອົບຮົມ.

## ເຕັກນິກການປູກຜັກໃນ YouTube

ມີຫຼາຍຫຼາຍວິດີໂອ ເຊັ່ນວ່າ : ເຕັກນິກການປູກຂັ້ນພື້ນຖານ ແລະ ວິດີໂອການສໍາພາດຊາວນາຜູ້ດຸໝັ່ນກໍ່ໄດ້ອັດລົງໃນຢູທູບ. ສາມາດເຂົ້າເລີ້ງຢູ່ດ້ານລຸ່ມນີ້! (ໃນຄືບມີແຕ່ພາສາລາວ)

https://www.youtube.com/channel/UCPXaIuToBNB7ycyVQAbMoEQ

ຫຼືຊອກໂດຍການພິມຄໍາວ່າ "ເພື່ອນກະເສດສະຫວັນ" ຈາກໜ້າຫຼັກຂອງຊ່ອງຢູ່ທູບ




ຕອນທີ 6.
ການປ້ອງກັນສັດຕູພືດ ໂດຍນໍາໃຊ້ແຜ່ນກາວ


ຈົດໝາຍແຈ້ງຂ່າວຂອງໂຄງການ ສະຫວັນເພັດ

ໂຄງການພັດທະນາ ກະສິກໍາ ແບບມີສ່ວນຮ່ວມ ແຂວງສະຫວັນນະເຂດ (ສະຫວັນເພັດ) ຕູ້ ປ.ນ. 16, ຂະແໜງຊົນລະປະທານ, ພະແນກ ກະສິກໍາ ແລະ ປ່າໄມ້ ແຂວງສະຫວັນນະເຂດ, (ໂທ : 041-252497)